ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ບໍລິຄໍາໄຊ

ພະແນກອຸດສາຫະກໍາ ແລະ ການຄ້າ

ເລກທີ...໓໕໓......./ພອຄ

ບໍລິຄໍາໄຊ, ລົງວັນທີ.໒...ມີນາ...໒໐໒໑

# ໜັງສືແຈ້ງການ

ເຖິງ : - ທ່ານປະທານສະພາການຄ້າ ແລະ ອຸດສາຫະກໍາ ແຂວງບໍລິຄໍາໄຊ.

- ບັນດາ ບໍລິສັດ/ໂຮງງານ ທີ່ນໍາໃຊ້ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດແຂວງບໍລິຄໍາໄຊ.

ເລື່ອງ: ການເລີ່ມຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າຜ່ານລະບົບເອເລັກໂຕຼນິກ (E-CO).

- ອີງຕາມ ແຈ້ງການສະບັບເລກທີ 0296/ຫອຄ.ກຂອ, ລົງວັນທີ 23 ທັນວາ 2019 ວ່າດ້ວຍການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າຜ່ານລະບົບເອເລັກໂຕຼນິກ.
- ອີງຕາມ ແຈ້ງການສະບັບເລກທີ 1428/ຫອຄ.ກຂອ, ລົງວັນທີ 28 ສິງຫາ 2020 ກ່ຽວກັບການຈັດຕັ້ງປະຕິບັດ ການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນຜ່ານລະບົບເລັກໂຕຼນິກ ຫຼື ATIGA E-FORM D.

**ພະແນກອຸດສາຫະກໍາ ແລະ ການຄ້າແຂວງບໍລິຄໍາໄຊ** ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ : ນັບແຕ່ວັນທີ **01 ມີນາ 2021** ເປັນຕົ້ນໄປ ແມ່ນເລີ່ມປະຕິບັດການນໍາໃຊ້ລະບົບການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າຜ່ານທາງເອເລັກໂຕຼນິກ (E-CO) ຄຽງຄູ່ກັບລະບົບເຈ້ຍສໍແບບເກົ່າເຊິ່ງໃນໄລຍະເລີ່ມການຈັດຕັ້ງປະຕິບັດນີ້ ຜູ້ປະກອບການທຸລະກິດສາມາດເລືອກໄດ້ວ່າ ຈະໃຊ້ລະບົບ (E-CO) ຫຼື ລະບົບເຈ້ຍສໍໃດໜຶ່ງກໍ່ໄດ້ ເພື່ອທັນເປັນທັນສະໄໝ ແລະ ອໍານວຍຄວາມສະດວກໃຫ້ແກ່ຜູ້ດໍາເນີນການສົ່ງອອກສິນຄ້າທີ່ນໍາໃຊ້ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ແນໃສ່ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ-ສອດຄ່ອງຕາມລະບຽບກົດໝາຍ ແລະ ລະບຽບການຂອງ ສປປລາວ ແລະ ສາກົນ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ

ພະແນກ ອຸດສາຫະກໍາ ແລະ ການຄ້າ ແຂວງບໍລິຄໍາໄຊ

ໄກສອນ ຈັນສີນາ

Kaysone CHANSYNA

ຕິດຕໍ່ປະສານງານ : ຂະແໜງການນໍາເຂົ້າ-ສົ່ງອອກ :

- ທ່ານ ພຸດທະວົງ ສີສະຫວັດ 020 23456684
- ນາງ ຫຼ້າແກ້ວ ວິໄລທິງ 020 54488996

Scanned by CamScanner